ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານ ນະໂຍບາຍ
ພະແນກ ເຕັກໂນໂລຊີ ຂໍ້ມູນຂ່າວສານ

ເລກທີ ... /ພຕຂ.ທນບ
ນະຄອນຫຼວງວຽງຈັນ, ວັນທີ 12 ມິຖຸນາ 2019

# ແຈ້ງແນະນຳ

ຮຽນ : ທ່ານ ຫົວໜ້າສາຂາ, ຫົວໜ້າໜ່ວຍບໍລິການ ທະນາຄານ ນະໂຍບາຍ ທີ່ນັບຖື.
ເລື່ອງ : ການນຳໃຊ້ຄອມພິວເຕີ ແລະ ອຸປະກອນເຊື່ອມໂຍງລະບົບ ຄໍແບັງຄິງ.

- ອີງຕາມ ພາລະບົບບາດ ຂອງພະແນກເຕັກໂນໂລຊີ ຂໍ້ມູນຂ່າວສານ ເລກທີ 1378/ທນບ, ລົງວັນທີ 16/12/2013.

ພະແນກເຕັກໂນໂລຊີ ຂໍ້ມູນຂ່າວສານ ແຈ້ງແນະນຳການນຳໃຊ້ຄອມພິວເຕີ ແລະ ອຸປະກອນເຊື່ອມໂຍງລະບົບ ຄໍແບັງຄິງ ມາຍັງທ່ານ ຫົວໜ້າ ສາຂາ, ຫົວໜ້າ ໜ່ວຍບໍລິການ ທະນາຄານ ນະໂຍບາຍ ທົ່ວລະບົບຊາບວ່າ: ເນື່ອງຈາກສະພາບອາກາດປະຈຸບັນເປັນລະດູຝົນ ມີຄວາມສ່ຽງສູງຕໍ່ການເກີດຟ້າຜ່າ ເຊິ່ງອາດສົ່ງຜົນເຮັດໃຫ້ໃຫ້ບັນດາເຄື່ອງເອເລັກໂຕຼນິກຕ່າງໆຢູ່ໃນສຳນັກງານຫ້ອງການເປ່ເພຈາກເຫດການດັ່ງກ່າວ ໂດຍສະເພາະຄອມພິວເຕີ, ເຄື່ອງພິມເອກະສານ, ຕູ້ອຸປະກອນເຊື່ອມໂຍງລະບົບ ຄໍແບັງຄິງ ແລະ ອື່ນໆ ເຊິ່ງອາດສ້າງຄວາມເສຍຫາຍຕາມມາ. ສະນັ້ນ, ເພື່ອເປັນການປ້ອງກັນ ແລະ ເປັນການຮັກສາຊັບສິນຂອງ ທະນາຄານ ໃຫ້ມີອາຍຸການນຳໃຊ້ຍາວນານຍິ່ງຂຶ້ນ, ຈຶ່ງແນະນຳໃຫ້ບັນດາທ່ານຈັດຕັ້ງປະຕິບັດດັ່ງນີ້:

1. ໃຫ້ພະນັກງານ ມີສະຕິ, ຕື່ນໂຕ ຫຼັງການນຳໃຊ້ເຄື່ອງເອເລັກໂຕຼນິກເຊັ່ນ: ຄອມພິວເຕີ, ປຣິນເຕີ, Photo Copy ແລະ ອື່ນໆ ເມື່ອນຳໃຊ້ແລ້ວໃຫ້ມອດເຄື່ອງ ພ້ອມທັງຖອດສາຍໄຟຟ້າອອກຈາກປັກສຽບ ກ່ອນອອກຈາກຫ້ອງການທຸກຄັ້ງ.
2. ສຳລັບອຸປະກອນເຊື່ອມໂຍງລະບົບ ຄໍແບັງຄິງ ຢູ່ສາຂາ, ໜ່ວຍບໍລິການ ກໍ່ໃຫ້ຈັດຕັ້ງປະຕິບັດເຊັ່ນກັນຄື: ມອດໝໍ້ເກັບໄຟພາຍໃນຕູ້ ແລະ ຖອດສາຍໄຟ ຫຼື ງັບ Breaker ຂອງຕູ້ Rack ເມື່ອປິດບັນຊີປະຈຳວັນສຳເລັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມຢ່າງເຂັ້ມງວດດ້ວຍ.

**ພະແນກເຕັກໂນໂລຊີ ຂໍ້ມູນຂ່າວສານ**

ທະນາຄານນະໂຍບາຍ
ພະແນກເຕັກໂນໂລຊີ ຂໍ້ມູນຂ່າວສານ

ຄຳສະຫວັດ ອິນທະວົງ

ບ່ອນສົ່ງ:
- ຄະນະສາຂາ ທົ່ວລະບົບ.
- ຄະນະໜ່ວຍບໍລິການ
- ສຳເນົາພະແນກ ເຕັກໂນໂລຊີ ຂໍ້ມູນຂ່າວສານ.